

## “ ຄະນະບໍດີ ”

ທ່ານ ຣສ. ວຽງວິໄລ ທ່ຽງຈັນໄຊ

ຄະນະນິຕະສາດ ແລະ ລັດຖະສາດໄດ້ສ້າງຕັ້ງຂຶ້ນໃນປີ1997, ຊຶ່ງມີພື້ນຖານຈາກໂຮງຮຽນກົດໝາຍຊັ້ນສູງຂອງກະຊວງຍຸຕິທຳໃນເມື່ອກ່ອນ, ຊຶ່ງມີປະຫວັດຄວາມເປັນມາໂດຍຫຍໍ້ ດັ່ງນີ້: ພາຍຫຼັງໄດ້ສະຖາປະນາ ສາທາລະນະປະຊາທິປະໄຕປະຊາຊົນລາວ ໃນວັນທີ 02 ທັນວາ 1975, ກະຊວງຍຸຕິທຳໄດ້ສ້າງຕັ້ງໂຮງຮຽນກົດໝາຍຂຶ້ນໃນປີ 1986 ເພື່ອກໍ່ສ້າງນັກວິຊາການ ກົດໝາຍຕອບສະໜອງຄວາມຮຽກຮ້ອງ ຕ້ອງການຂອງສັງຄົມ ໃນຂອບເຂດທົ່ວປະເທດ. ໃນເບື້ອງຕົ້ນຫຼັກສູດການຮຽນ ຂອງໂຮງຮຽນກົດໝາຍແຫ່ງນີ້ມີແຕ່ 03 ປີເທົ່ານັ້ນ,ຕໍ່ມາໂຮງຮຽນກົດໝາຍແຫ່ງນີ້ ໄດ້ຍົກລະດັບຂຶ້ນເປັນໂຮງຮຽນກົດໝາຍຊັ້ນສູງ ຊຶ່ງມີຫຼັກສູດການຮຽນ 5 ປີ ແລະ ສຸດທ້າຍໃນປີ 1996 ພັກແລະ ລັດຖະບານ ສປປ ລາວ ໄດ້ມີນະໂຍບາຍ ຫັນເອົາສະຖາບັນການສຶກສາຊັ້ນສູງ 10 ສະຖາບັນຢູ່ພາຍໃນນະຄອນຫຼວງວຽງຈັນ ໂຮມເຂົ້າກັນ ເພື່ອສ້າງເປັນ ມະຫາວິທະຍາໄລແຫ່ງຊາດ.ດັ່ງນັ້ນ, ມາເຖິງປີ 1997 ກະຊວງຍູຕິທ ແລະ ກະຊວງສຶກສາຈຶ່ງຕົກລົງມອບ-ຮັບ ໂຮງຮຽນກົດໝາຍຊັ້ນສູງ ແຫ່ງນີ້ໃຫ້ເປັນຄະນະໜຶ່ງຂອງມະຫາວິທະຍາໄລແຫ່ງຊາດ ແລະຂຶ້ນກັບກະຊວງສຶກສາທິການ ໂດຍເອີ້ນຊື່ວ່າ: ຄະນະ ນິຕິສາດ ແລະ ລັດຖະສາດ ນັບແຕ່ເວລານັ້ນເປັນຕົ້ນມາ.

ຄະນະ ນິຕິສາດ ແລະ ລັດຖະສາດ ເບື້ອງຕົ້ນມີ 02ພາກວິຊາຄື: ພາກວິຊານິຕິສາດ ແລະ ພາກວິຊາລັດຖະສາດ. ຫຼັງຈາກນັ້ນປີ 2004 ໄດ້ ສ້າງຕັ້ງພາກວິຊາພົວພັນສາກົນ, ຕໍ່ມາປີ2007 ໄດ້ສ້າງຕັ້ງພາກວິຊາກົດໝາຍທຸລະກິດ ແລະ ມາເຖິງປີ2010 ໄດ້ແຍກພາກວິຊານິຕິສາດ ອອກເປັນພາກວິຊາກົດໝາຍແພ່ງ ແລະ ພາກວິຊາກົດໝາຍອາຍາ. ສະນັ້ນ, ປັດຈຸບັນນີ້ຄະນະນິຕິສາດ ແລະ ລັດຖະສາດ ໄດ້ມີ 05 ພາກວິຊາຄື: ພາກວິຊາກົດໝາຍແພ່ງ, ພາກວິຊາກົດໝາຍອາຍາ, ພາກວິຊາລັດຖະສາດພາກວິຊາພົວພັນສາກົນ, ແລະ ພາກວິຊາກົດດໝາຍທຸລະກິດຕະຫລອດ 15 ປີຜ່ານມາຜູ້ທີ່ຈົບການສຶກສາລະດັບປະລິນຍາຕີ5,000 ກວ່າຄົນ ແລະປະລິນຍາໂທ 30.

## ຄຳຂັວນຂອງຄະນະນິຕິສາດ ແລະ ລັດຖະສາດ

**"ເສີມສ້າງຄວາມຮູ້ ເຊີດຊູຄວາມຍຸຕິທຳ ຄຽງຄູ່ຈັນຍາບັນ ຍຶດໝັ້ນລະບຽບວິໄນ ຄົ້ນຄິດຜົນງານວິໃຈ**

**ກ້າວໄປສູ່ລັດແຫ່ງກົດໝາຍ "**

ຄະນະນິຕິສາດ ແລະ ລັດຖະສາດແມ່ນຄະນະໜຶ່ງໃນ 11 ຄະນະວິຊາຂອງມະຫາວິທະຍາໄລແຫ່ງທີ່ຈະສືບຕໍ່ພັດທະນາໃຫ້ກາຍເປັນສູນກາງ ການສຶບສາດ້ານກົດໝາຍ, ລັດຖະສາດ ແລະ ການພົວພັນ ສາກົນທີ່ມີຄຸນນະພາບ, ເປັນສູນກາງແຫ່ງການຄົ້ນຄວ້າວິທະຍາສາດ ກົດໝາຍທີ່ມີຄວາມ ເຂັ້ມແຂງ,ມີບົດບາດນຳໜ້າທາງດ້ານການພັດທະນາວິຊາການ ສາມາດຮັບ ປະກັນໄດ້ລັກສະນະຊາດ, ວິທະຍາສາດ-ທັນສະໄໝ ແລະ ລັກສະນະມະຫາຊົນຂອງການສຶກສາ, ສ້າງຊັບພະຍາກອນມະນູດໃນຂົງເຂດກົດໝາຍ, ລັດຖະສາດ ແລະ ການພົວພັນສາກົນໃຫ້ມີການພັດທະນາຢ່າງຮອບດ້ານ: ດ້ານຄວາມຮູ້, ຄວາມສາມາດ, ຄູນສົມບັດ, ຈະລິຍະທຳ ແລະ ຄວາມສີວິໄລ ທາງດ້ານຈິດໃຈເພື່ອຕອບສະໜອງບຸກຄະລາກອນທີ່ມີຄຸນນະພາບ ໃຫ້ແກ່ການພັດທະນາເສດຖະກິດ - ສັງຄົມຂອງປະເທດ. ອີງໃສ່ຄວາມຮຽກຮ້ອງຕ້ອງການຂອງສັງຄົມ ໃນປັດຈຸບັນ, ແຕ່ລະພາກວິຊາໃຫ້ມີຄວາມສາມາດເປີດ ສອນຫຼັກສູດປະລິນຍາໂທໃຫ້ໄດ້ອານາຄົດ ອັນໃກ້ນີ້ ແລະ ກະກຽມຫລັກສູປະລິນຍາ ເອກກົດໝາຍ ຕາມເງື່ອນໄຂທີ່ເໝາະສົມ, ສົ່ງເສີມການ ສຶກສາທີ່ເອົານັກສຶກສາເປັນໃຈກາງແນ່ໃສ່ເຮັດໃຫ້ນັກສຶກສາ ມີສ່ວນຮ່ວມຫຼາຍຂຶ້ນ ໃນການສຶກສາ,ເຮັດໃຫ້ ເຂົາເຈົ້າສາມາດຮຽນຮູ້ວິຊາສະເພາະ ໂດຍຫຼາຍກິດຈະກຳເສີມຫລັກສູດດ້ອຍດານເຂົ້າຮ່ວມ ໃນກຸ່ມສຶກສາຕ່າງໆ ເຊັ່ນ: ກຸ່ມສິດທິມະນຸດ,ກຸ່ມຮັກສາສະພາບແວດລ້ອມ, ສະມາຄົມນັກສຶກສາແຫ່ງເອເຊັຍ(ALSA) ແລະ ອື່ນໆ. ນອກຈາກນີ້, ຄນລ ຕ້ອງເປັນຄະນະວິຊາ ທີ່ມີສະພາບແວດລ້ອມການສຶກສາທີ່ດີ. ໂດຍສະເພາະແມ່ນຂະປັບປຸງສະຖານສຶກສາອັນໄດ້ງ່າຫ້ອງຮຽນ, ຫໍສະໝຸດ ພ້ອມດ້ອຍສິ່ງອຳນວຍຄວາມສະດວກຕ່າງໆ ແລະ ຫໍພັກນັກສຶກສາ.

## ໂຄງປະກອບການຈັດຕັ້ງ

1.ຄະນະບໍດີ, ຊີ້ນຳລວມພ້ອມທັງຮັບຜິດຊອບວຽກ
ງານພົວພັນຕ່າງປະເທດ
ທ່ານ ຮສ. ວຽງວິໄລ ທ່ຽງຈັນໄຊ

2.ຮອງຄະນະບໍດີ ຝ່າຍບໍລິຫານ
ທ່ານ ອາຈານ ພູວົງ ວິໄລແສງ

3.ຮອງຄະນະບໍດີ ຝ່າຍຄຸ້ມຄອງນັກສຶກສາ
ທ່ານ ຮສ. ແສງເພັດ ອຸໄທ

4.ຮອງຄະນະບໍດີຝ່າຍວິຊາການ
ທ່ານ ຮສ. ບຸນທ່ຽງ ພົມມະຈັນ

5.ຫົວໜ້າພາກວິຊາກົດໝາຍແພ່ງ
ທ່ານ ອາຈານ ວິໄຊ ສີຫາປັນຍາ

6.ຫົວໜ້າພາກວິຊາລັດຖະສາດ
ທ່ານ ອາຈານ ນາງ ວິໄລ ລັງກາວົງ

7.ຫົວໜ້າພາກວິຊາພົວພັນສາກົນ

ທ່ານ ອາຈານ ບຸນຄົງ ເພັດດາວຣຸ່ງ

8.ຫົວໜ້າພາກວິຊາກົດໝາຍທຸລະກິດ

ທ່ານ ຣສ. ໄພມະນີ ໄຊວົງສາ

9.ຫົວໜ້າພາກວິຊາກົດໝາຍອາຍາ

ທ່ານ ອາຈານ ແສງທະວີ ອິນທະວົງ

10.ຫົວໜ້າພະແນກບໍລິຫານວິຊາການ

ທ່ານ ອາຈານ ດວງມາລາ ຄໍາສີງກາ

11.ຫົວໜ້າພະແນກຄົ້ນຄວ້າວິທະຍາສາດ ແລະ ຫຼັງປະລິນຍາຕີ.

ທ່ານ ອາຈານ ຄໍາຜາງ ວົງພະຈັນ

12.ຫົວໜ້າພະແນກຈັດຕັ້ງ-ສັງລວມ

ທ່ານ ອາຈານ ທ່ານ ອາຈານ ພອນໄຊ

13.ຫົວໜ້າພະແນກການເງິນ ແລະ ຄຸ້ມຄອງຊັບສິນ

ທ່ານ ກອງມາ

14.ຫົວໜ້າພະແນກຄຸ້ມຄອງນັກສຶກສາ

ທ່ານ ອາຈານ ທັດສະນາລອນ ສີສຸນິນ

15.ຫົວໜ້າພະແນກຫ້ອງສະໝຸດ

ທ່ານ ອາຈານ ແສງພາວັນ ອຸດທະຈັກ

16. ຫົວໜ້າພະແນກຄົ້ນຄ້ວາວິທະຍາສາດ ແລະ ບໍລິການວິຊາການ

ທ່ານ ອາຈານ ສົມສັກ ສີລິທິບ

## ການຮ່ວມມືພາຍໃນ ແລະ ຕ່າງປະເທດ

## ຂອງ ຄະນະນິຕິສາດ-ລັດຖະສາດ

ການຮ່ວມມືສາກົນຂອງ ຄນລ, ຄນລ ໄດ້ພັດທະນາການຮ່ມມືສາກົນຢ່າງຕໍ້ງໜ້າ ແລະ ຕໍ່ເນຫ່ອງ, ເລີ່ແຕ່ປີ 2000 ເປັນຕົ້ນມາໂຄງການ SIDA ປະເທດ SWEDEN ໄດ້ໃຫ້ການສະໜັບສະໜູນ ຄນລ ເພື່ອສົ່ງເສີມໃຫ້ນັກສຶກສາທີ່ຈົບຈາກ ຄນລ ມີຄຸນນະພາບທີ່ດີໂດຍແນ່ໃສສາມເປົ້າໝາຍຄື: ປັບປຸງຄວາມຮູ້ຄວາມສາມາດໃຫ້ຄູ-ອາຈານ, ປັບປຸງການຄຸ້ມຄອງບໍລິຫານ ແລະ ສົ່ງເສີມແຮງຈູງ ໃຈຂອງນັກສຶກສາຊຶ່ງ ເປັນໂຄງການສ□າຄັນໃນການສົ່ງເສີມການສຶກສາ ດ້ານກົດໝາຍຢູ່ ສປປ ລາວ ແລະ ໂດຍສະເພາະກໍແມ່ນຄະນະນິຕິ
ສາດ ແລະ ລັດຖະສາດ. ມາຮອດທ້າຍປີ 2010 ຫລັງຈາກທີ່ໄດ້ເຮັດໜ້າທີ່ທີ່ສໍາຄັນ ແລະ ປະສົບຜົນສໍາເລັດ ໃນຫລາຍດ້ານໂຄງການ SIDA ກໍໄດ້ໝົດໜ້າທີ່ໃຫ້ການຊ່ວຍເຫລືອແກ່ ສປປ ລາວ ຊຶ່ງກໍລວມທັງ ຄນລ ນໍາດ້ອຍ. ໂດຍເຫລັ່ງເຫັນຄວາມສໍາຄັນ ໃນການສ້າງລັດແຫ່ງກົດໝາຍ ຊ່ອງທາງການສຶກສາກົດໝາຍຢູ່ ຄນລ ແມ່ນໜຶ່ງໃນສ່ວນປະກອບທີ່ສໍາຄັນນັ້ນ ຄນລ ກໍໄດ້ຮັບການສະໜັບສະໜູນ ຈາກໂຄງການຂອງປະເທດ Luxembourg ທີ່ສືບການພັດທະນາ ຄນລ ໃຫ້ມີຄວາມເຂັ້ມແຂງ ແລະ ຍັ້ງຍືນ, ແນໃສ່ສ້າງຊັບພະຍາກອນມະນຸດດ້ານກົດໝາຍອອກຮັບໃຊ້ລັດ ແລະ ສັງຄົມໃຫ້ມີຄຸນນະພາບ. ເປົ້າໝາຍຕົ້ນ ຕໍຂອງໂຄງການ ນີ້ກໍເພື່ອສົ່ງເສີມການຄຸ້ມຄອງລັດ ດ້ວຍກົດໝາຍໂດຍຜ່ານ ການສຶກສາກົດໝາຍ ທາງລະດັບມະຫາວິທະໄລ, ຊຶ່ງໂຄງການດັ່ງກ່າວນີ້ ນອກຈາກຈະຊ່ວຍສົ່ງເສີມການພັດທະນາດ້ານບຸກຄະລາກອນໃຫ້ມີຄຸນນະພາບ ແລ້ວ ຍັງຈະຊ່ວຍເສີມ

ສ້າງ ໃຫ້ມີຄວາມເຂັ້ມແຂງດ້ານການຄຸ້ມຄອງບໍລິຫານ, ພັດທະນາໂຄງລ່າງ ແລະ ສິ່ງອ□ານວຍຄວາມສະດວກໃຫ້ແກ່ການສຶກສານໍາ, ອີກດັ່ງເຊັ່ນ: ໂຄງການກໍ່ສ້າງຫໍພັກນັກສຶກສາ ທີ່ສາມາດບັດຈຸນັກສຶກສາ ໄດ້ເຂົ້າພັກໄດ້ເຖິງ 400 ຄົນ ແລະ ຫ້ອງຮຽນອະເນກ ປະສົງໃຫ້ມີມາດຕະຖານ ດັ່ງນີ້ເປັນຕົ້ນ. ນອກຈາກໂຄງການຮ່ວມມືທີ່ເປັນພື້ນຖານນີ້ແລ້ວ ຄນລ ຍັງມີການຮ່ວມມມື ບັນດາມະຫາວິທະຍາໄລຕ່າງໆ ທັງຂອບເຂດຂອງ ASEAN, ພາກພື້ນ ແລະ ສາກົນຈ□ານວນໜຶ່ງເພື່ອສົ່ງເສີມແລະ ແລກ ປ່ຽນການຮ່ວມມືທາງດ້ານວິຊາການ. ປັດຈູບັນ ຄນລ ມີບົດ ບັນທຶກການຮ່ວມມື (MOU)ດ້ານວິຊາການໃນ ລະດັບ ມະຫາວິທະຍາໄລ ແລະ ຄະນະ ວິຊາກັບ 6 ມະຫາວິທະຍາໄລຄື : ມະຫາວິທະຍາໄລທໍາມະສາດ,ມະຫາວິທະຍາໄລມະຫາສາລະຄາມ ແລະ ມະຫາວິທະຍາໄລ ແມ່ຟ້າຫລວງ ແຫ່ງຣາຊະອານາຈັກໄທ, ມະຫາວິທະຍາໄລແຫ່ງຫວຽດນາມ, ມະຫາວິທະຍາໄລ JEAN MOULIN LYON 3 ຂອງຝຣັ່ງ ແລະມະຫາວິທະຍາໄລ NAGOYAປະເທດຍີ່ປຸ່ນ. ຄນລ ຍັງສືບຕໍ່ສອນກົດໝາຍເປັນພາສາຝຣັ່ງພາຍໃຕ້ການຮ່ວມມືກັບໂຄງການ AUF, ໄດ້ຮັບການຮ່ວມມືແລະ ສະໜັບສະໜຸນຈາກອົງການຈັດຕັ້ງສາກົນ ອື່ນໆ ທີ່ກ່ຽວຂ້ອງ, ສົ່ງເສີມໃຫ້ມີການພັດທະນາ ການສຶກສາກົດໝາຍຢ່າງຕໍ່ມາເນື່ອງ, ມີຄຸນນະພາບ ແລະ ມີມາດຕະຖານສາກົນເທື່ອລະກ້າວ.